## ການປ້ອງກັນ

1. ຫ້າມບໍ່ໃຫ້ເຄື່ອນຍ້າຍສັດ ແລະ ຂ້າສັດໃນເຂດທີ່ມີພະຍາດປາກເປື່ອຍລີ້ງເລັບລະບາດແລ້ວຢ່າງເດັດຂາດ.
2. ແຍກສັດເຈັບອອກຈາກຝູງ
3. ສັກຢາວັກຊິນປ້ອງກັນທຸກໆ 6 ເດືອນ.






**ກວດແກ້ໂດຍ: ທ່ານ ສິມໄຊ ສີຊານິນ ຫົວໜ້າກົມສົ່ງເສີມກະສິກຳ ແລະ ສະຫະກອນ**

**ຂັນທະນູ 020 5599 6544**

**ອີເມວ** *:khantn_lsv@hotmail.com*

**ເບີໂທ: + 85621732072**



**ສະໜັບສະໜູນໂດຍ:**

**EU** **The TAP-AIS project**


# ພະຍາດປາກເປື່ອຍ ລີ້ງເລັບ

## (Foot and Mouth Disease)





ພະຍາດປາກເປື່ອຍລີບເລັບເປັນພະຍາດທີ່ຕິດຕໍ່ໄວທີ່ສຸດ ສໍາລັບສັດເລັບຕີນຄູ່ ເຊັ່ນ: ງົວ-ຄວາຍ, ແບ້ ແລະ ໝູ

ພະຍາດນີ້ຈະເຮັດໃຫ້ສຸຂະພາບສັດຊຸດໂຊມ, ນໍ້າໜັກຫຼຸດ, ຈ່ອຍຜອມ

## ອາການ:

ສັດເປັນພະຍາດນີ້ຈະບໍ່ກິນອາຫານຍ້ອນເຈັບ ປາກ ແລະ ເປັນຕຸ່ມ ຫຼື ບາດແຜໃນປາກ; ລີ້ນ, ເຫືອກ, ຜົ້ງແກ້ມ ມີນໍ້າລາຍໄຫຼເປັນຍາງ.

ນອກຈາກນີ້ຍັງພົບເມັດຕຸ່ມ ແລະ ບາດແຜ ບໍລິເວນກີບຕີນສັດ ເຮັດໃຫ້ມີອາການເຈັບຕີນ ແລະ ຍ່າງຂາຫ້ານ.

## ການປິ່ນປົວ

### ປິ່ນປົວດ້ວຍຢາ:

- ເມທີແລນບລູ (Methylene blue),
- ອັອກຊີບລູ (Oxy blue)




### ວິທີໃຊ້:

ສີດໃສ່ປາກ ຫຼື ທ່າບ່ອນທີ່ມີບາດແຜ 2ຄັ້ງ/ມື້

- ໃຊ້ຢາ (Negasunt)ຂ້າໜອນ ໃສ່ບາດເພື່ອກັນແມງວັນໄຂ່ໃສ່.




- ຕິດຕໍ່ຫາສັດຕະວະແພດບ້ານມາສັກຢາ ຕ້ານເຊື້ອການແຊກຊ້ອນຂອງແບກທີເຣຍ.

### ປິ່ນປົວດ້ວຍຢາສະໝຸນໄພ

ໂດຍໃຊ້ເປືອກໄມ້ທີ່ມີລົດຝາດ ຫຼື ໝາກໄມ້ປະເພດ ສົ້ມ ເຊັ່ນ: ເປືອກກະໂດນໂຄກ, ເປືອກໝາກ ຂາມປ້ອມ, ເປືອກດູ່, ເປືອກເຄືອໝາມຫັນແດງ, ແລະ ເປືອກໄມ້ ອື່ນໆ ເຫັນວ່າເປັນປະເພດຝາດ

ວິທີການປຸງແຕ່ງຢາດັ່ງລຸ່ມນີ້: ເອົາເປືອກໄມ້ ດັ່ງກ່າວໄປທຸບໃຫ້ມຸ່ນ, ຕົ້ມຂົ້ນງວດ, ປະໄວ້ໃຫ້ເຢັນ ແລ້ວທາໃສ່ບາດແຜຢູ່ຕີນສັດ, ປະຕິບັດ ໄປ 2-3 ມື້ ລຽນຕິດ ອາການບາດແຜຈະດີຂຶ້ນ

